ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

# ຂໍແບ່ງມູນມໍລະດົກ

## ກໍລະນີຄວາມຂັດແຍ່ງທີ່ພົ້ນເດັ່ນໃນສັງຄົມປັດຈຸບັນທີ່ທ່ານຄວນຈະສຶກສາ



ບັນຫາຂອງສອງຄົນທີ່ບໍ່ລົງເອີຍກັນຕໍ່ຜົນປະໂຫຍດໃນການນຳໃຊ້ດິນທີ່ພາກສ່ວນລັດຕ້ອງເຂົ້າມາມີບົດບາດໃນການໄກ່ເກ່ຍ ໃຫ້ໄດ້ຮັບຄວາມຍຸຕິທຳຕໍ່ໜ້າກົດໝາຍ.

ຂຽນໂດຍ: ດາວວົງ ພົນພັກດີ

*ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.*

http://www.rightslinklao.org

ບ້ານ ໂພນສະຫວັນໃຕ້, ໜ່ວຍ 14, ເຮືອນເລກທີ 207
ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 (0)21 312519
ແຟກ: +856 (0)21 315841

ອົງການບ້ານຈຸດສຸມສາກົນ (VFI)

ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)

ສະໜັບສະໜູນທຶນໂດຍ: ອົງການເພື່ອການພັດທະນາ ແລະ ການຮ່ວມມື
ແຫ່ງປະເທດສະວິດເຊີແລນ (SDC)

# ສາລະບານ


| | |
|---|---|
| ສາລະບານ | III |
| ພາກສະເໜີ | 1 |
| ປະຫວັດຄວາມເປັນມາ: | 1 |
| ບັນຫາທີ່ເກີດຂຶ້ນລະຫວ່າງ 2 ຄົນນ້າສາວກັບຫລານ: | 4 |
| ວິເຄາະກ່ຽວກັບກໍລະນີບັນຫາຂອງເລື່ອງທີ່ເກີດຂຶ້ນ: | 7 |
| ສະຫລຸບ. | 9 |
| ຂໍ້ສະເໜີແນະ. | 9 |
| ເອກະສານອ້າງອີງມາຈາກ: | 10 |

# 1. ພາກສະເໜີ.

ໂດຍພື້ນຖານແລ້ວໃນການດຳລົງຊີວິດຂອງຄົນເຮົາແມ່ນມີຄວາມຕ້ອງການປັດໄຈທີ່ສຳຄັນ4 ຢ່າງຄື: ມີທີ່ພັກອາໄສ, ມີອາຫານການກິນ, ມີເຄື່ອງນຸ່ງຫົ່ມ ແລະ ຢາປົວພະຍາດ. ຊຶ່ງເລີ່ມຈາກການດຳລົງຊີວິດແບບຮຽບງ່າຍ, ມີຄວາມອູ້ມຊູຊ່ວຍເຫລືອເກື້ອກູນຊຶ່ງກັນ ແລະ ກັນຈົນກ້າວໄປສູ່ການຢູ່ຮ່ວມກັນເປັນສັງຄົມ. ສັງຄົມລາວກໍແມ່ນອີກສັງຄົມໜຶ່ງທີ່ປະຊາຊົນດຳລົງຊີວິດໂດຍໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນຕະຫຼອດມາ.

ເມື່ອສັງຄົມມີການຂະຫຍາຍຕົວລະບົບພື້ນຖານໂຄງລ່າງໄດ້ຮັບການພັດທະນາ.ໄປໃນສິ່ງໃໝ່ໆທີ່ມີຄວາມສະດວກສະບາຍເພີ່ມຂຶ້ນ, ເຮັດໃຫ້ຄົນເຮົາເກີດມີຄວາມຕ້ອງການສິ່ງຕ່າງໆ ເພື່ອມາຕອບສະໜອງຢູ່ໃນການດຳລົງຊີວິດປະຈຳວັນຫຼາຍຂຶ້ນ. ແນວໃດກໍຕາມການທີ່ສັງຄົມມີການຂະຫຍາຍຕົວນັ້ນບໍ່ໄດ້ພັດທະນາແນວຄິດຂອງຜູ້ຄົນໃນສັງຄົມ. ເຮັດໃຫ້ບາງບຸກຄົນເຫຼົ່ານັ້ນ, ເກີດມີນິໄສຄວາມເຫັນແກ່ຕົວຫຼາຍກ່ວາ ຜົນປະໂຫຍດຂອງຜູ້ອື່ນ. ອັນເປັນສາເຫດນຳໄປສູ່ບັນຫາຂໍ້ຂັດແຍ່ງໃນສັງຄົມໂດຍສະເພາະຂໍ້ຂັດແຍ່ງຢູ່ ໃນຄອບຄົວກ່ຽວກັບມູນມໍລະດົກ. ດັ່ງທີ່ສະແດງໃຫ້ເຫັນໃນກໍລະນີການຂໍແບ່ງປັນມູນມໍລະດົກທີ່ເກີດຂຶ້ນຢູ່ ບ້ານທ່ານາ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ທີ່ບໍ່ລົງລອຍກັນຂອງສອງກົ້າສອງຝ່າຍຕ້ອງໄດ້ ຮ້ອງຟ້ອງໄປຮອດຂະບວນການຍຸຕິທຳ. ດັ່ງຈະເລົ່າໃນລາຍລະອຽດໃນຫົວຂໍ້ຕໍ່ລົງໄປນີ້.

# 2. ປະຫວັດຄວາມເປັນມາ:

ຊ່ວງກ່ອນ ປີ 1975 ມີຄອບຄົວໜຶ່ງຢູ່ທີ່ ບ້ານທ່ານາ ເມືອງຫາດຊາຍຟອງ ນະຄອນຫລວງວຽງຈັນ, ຊື່ພໍ່ຕູ້ສາ ແລະ ແມ່ຕູ້ສີ (ນາມສົມມຸດ) ມີລູກຢູ່ຮ່ວມກັນທັງໝົດ 5 ຄົນຄື:

1. ທ. ມີ (ນາມສົມມຸດ).
2. ທ. ມາ (ນາມສົມມຸດ).
3. ນ. ລາ (ນາມສົມມຸດ).
4. ທ. ຕາ (ນາມສົມມຸດ).
5. ນ. ຈຳປາ (ນາມສົມມຸດ).

ຄອບຄົວນີ້ໄດ້ຢູ່ຮ່ວມກັນດ້ວຍຄວາມຖືກຕ້ອງປອງດອງກັນຕະຫຼອດມາ. ໃນຄອບຄົວນີ້ມີຊັບສິນທີ່ເປັນດິນ ແລະ ເຮືອນທັງໝົດ 7 ລາຍການທີ່ຕັ້ງຢູ່ບ້ານທ່ານາ ແລະ ບ້ານດອນດູ່ ເມືອງຫາດຊາຍຟອງ ນະຄອນຫລວງວຽງຈັນ (ອ້າງອີງຈາກເອກະສານຄຳຕັດສິນຂອງສານ), ຕີເປັນມູນຄ່າມະຫາສານຊຶ່ງລາຍລະອຽດຕ່າງໆຂອງຊັບສິນມີດັ່ງນີ້:

- ຢູ່ບ້ານທ່ານາ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ.
    1. ທີ່ດິນພ້ອມດ້ວຍເຮືອນໄມ້ 2 ຫຼັງ.
    2. ທີ່ດິນ ພ້ອມດ້ວຍເຮືອນ 1 ຫຼັງ.
    3. ທີ່ດິນນາ 1 ຕອນ.

- ຢູ່ບ້ານດອນດູ່, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ.

    4. ດິນສວນ 1 ຕອນ ພ້ອມໜອງປາໃຫຍ່ 3 ໜອງ.
    5. ດິນສວນ 1 ຕອນ ພ້ອມດ້ວຍໜອງປານ້ອຍ 1 ໜອງ.
    6. ດິນສວນ 1 ຕອນ.
    7. ດິນນາ 1 ຕອນ.

ເມື່ອໄລຍະເວລາຜ່ານໄປ ນ. ຈຳປາ ຜູ້ເປັນລູກສາວຫລ້າ ກໍໄດ້ແຕ່ງງານເອົາຜົວມາຢູ່ເຮືອນກ່ອນບັນດາອ້າຍເອື້ອຍທັງ 4 ຕໍ່ມາ ນ. ລາ ຜູ້ເປັນເອື້ອຍຈຶ່ງໄດ້ສ້າງຄອບຄົວເຊັ່ນກັນ. ແຕ່ອອກເຮືອນໄປຢູ່ນຳຜົວແລ້ວມີລູກນຳກັນ 1 ຄົນ. ຄື ທາລີກ້າ, ຍ້ອນຄວາມຮູ້ເທົ່າບໍ່ເຖິງການ ແລະ ບໍ່ເຫັນແຈ້ງຕໍ່ລະບອບໃໝ່ເທື່ອ, ໃນປີ 1975 ນ. ລາ ກໍໄດ້ປະຜົວ ແລະ ລູກ ເວລານັ້ນ, ເດັກຊາຍກ້າຫາກໍມີອາຍຸພຽງ 6 ເດືອນ. ກຳລັງໜ້າຮັກໜ້າຊັງ. ໂຕນໜີໄປຕ່າງປະເທດພ້ອມກັບອ້າຍຜູ້ຊື່ມາ. ຜົວຂອງນາງມີໂອກາດລ້ຽງລູກໄດ້ພຽງ 3 ເດືອນ. ຈາກນັ້ນຄອບຄົວພໍ່ເຖົ້າແມ່ເຖົ້າ (ພໍ່-ແມ່ຂອງ ນ.ລາ) ກໍມາຂໍເອົາຫຼານຊາຍຊື່ທ້າວກ້າໄປລ້ຽງ.



ການເວລາຜ່ານໄປພາໃຫ້ ເດັກຊາຍກ້າ ເຕີບໂຕເປັນຊາຍໜຸ່ມ. ຂະນະດຽວກັນ, ຄົນໃນຄອບຄົວກໍມາລົ້ມຫາຍຕາຍຈາກເຊັ່ນກັນ. ໃນປີ 1980, ປີ 1981, ປີ 1986 ແລະ ປີ 1987 ແມ່ຕູ້ສີ ແລະ ລຸງຕາ, ພໍ່ຕູ້ສາ ແລະ ລຸງມີ ກໍມາເສຍຊີວິດລົງຕາມລຳດັບ. ເຫຼືອພຽງແຕ່ຄອບຄົວນ້າສາວ ຈຳປາ ແລະ ຕົນເອງ ພ້ອມກັບຊັບສິນທັງ 7 ລາຍການ ທີ່ເປັນມໍລະດົກຕົກທອດຂອງພໍ່ຕູ້ແມ່ຕູ້ ທີ່ນ້າສາວເປັນຜູ້ຄອບຄອງດ້ວຍຄວາມຫວງແຫນເປັນທີ່ສຸດ ແລະ ບໍ່ມີວີ່ແວວວ່າ ຈະແບ່ງສ່ວນໃດໃຫ້ຕົນຜູ້ທີ່ເປັນທັງຫຼານໃນສາຍເລືອດ ແລະ ນັບວ່າເປັນລູກລ້ຽງຂອງພໍ່ແມ່ດຽວກັນ. ເຮັດໃຫ້ໃນໄລຍະຕໍ່ມາຈຶ່ງເກີດບັນຫາຄວາມຂັດແຍ່ງລະຫວ່າງສາຍເລືອດຄື ທ. ກ້າ ແລະ ນ. ຈຳປາ ດັ່ງຈະກ່າວຕໍ່ໄປໃນຫົວຂໍ້ລຸ່ມນີ້.



## ບັນຫາທີ່ເກີດຂຶ້ນລະຫວ່າງ 2 ຄົນນ້າສາວກັບຫລານ:

ຕົກມາຮອດວັນໜຶ່ງຕົ້ນປີ 2004 ຫລັງຈາກ ທ. ກ້າ (ນາມສົມມຸດ) ຜູ້ເປັນຫລານເຕີບໂຕເປັນໜຸ່ມໃຫຍ່ອາຍຸໄດ້ 30 ປີ. ເຂົາກໍເກີດມີຄວາມຄິດວ່າ ຕົນເອງໜ້າຈະມີສິດ ແລະ ມີສ່ວນຮ່ວມທີ່ຈະໄດ້ມູນມໍລະດົກເຫຼົ່ານັ້ນທີ່ພໍ່ຕູ້-ແມ່ຕູ້ປະໄວ້ໃຫ້ກ່ອນຕາຍ ແລະ ຕົນເອງກໍໜ້າຈະໄດ້ໃນສ່ວນໜຶ່ງໃນນາມແມ່ຕົນ ຫລື ຖານະຫຼານ ຫຼື ວ່າ ຖານະລູກຄົນໜຶ່ງຂອງພໍ່ຕູ້ແມ່ຕູ້. ຈຶ່ງໄດ້ຂໍແບ່ງປັນໃນສ່ວນທີ່ເປັນເຮືອນກັບດິນທີ່ຕົນເອງ ໄດ້ອາໄສຢູ່ແຕ່ຕົ້ນມາ. ແຕ່ນ້າສາວກໍບໍ່ຍອມຍົກໃຫ້ ຈຶ່ງໄດ້ເກີດມີປາກສຽງຜິດຖຽງກັນຂຶ້ນ ອັນເປັນຈຸດເລີ່ມຕົ້ນຂອງເລື້ອງ.

ທ. ກ້າ ເກີດມີຄວາມອຸກອັ່ງເໜືອວິໄສກັບບັນຫານີ້ທີ່ນ້າສາວບໍ່ຍອມແບ່ງໃຫ້ຈຶ່ງໄດ້ຍື່ນເອກະສານຄຳຮ້ອງຟ້ອງຂຶ້ນສານຂັ້ນຕົ້ນນະຄອນຫລວງ (ສະບັບລົງວັນທີ 25/9/2004). ເມື່ອສານໄດ້ຮັບຄຳຮ້ອງຟ້ອງດັ່ງນັ້ນຄະນະສານແພ່ງຂອງສານປະຊາຊົນ ຈຶ່ງໄດ້ນຳເຂົ້າສູ່ຂະບວນການພິຈາລະນາວິນິດໄສຕາມຂະບວນການຍຸຕິທຳດ້ານກົດໝາຍ.

ໃນລະຫວ່າງຂັ້ນຕອນການພິຈາລະນານັ້ນ, ທັງສອງກໍໄດ້ຍົກເຫດຜົນເພື່ອຢັ້ງຢືນໃຫ້ແກ່ຕົນ:

ຝ່າຍ ທ. ກ້າ ຜູ້ເປັນຫລານໃຫ້ເຫດຜົນວ່າ: "ຕົນເອງເປັນລູກລ້ຽງຂອງພໍ່ຕູ້ສາ ແລະ ແມ່ຕູ້ສີມາແຕ່ອາຍຸ 9ເດືອນ. ດັ່ງຄຳເວົ້າຕອນໜຶ່ງວ່າ "ຂ້ອຍກໍເປັນລູກລ້ຽງຂອງພໍ່ຕູ້ສາ-ແມ່ຕູ້ສີ, ຂ້ອຍມີຫລັກຖານໃບຢັ້ງຢືນຮ່ວມກັນຂອງອຳນາດການປົກຄອງ ບ້ານທ່ານາ ເຊັນຢັ້ງຢືນຄັ້ງວັນທີ 21/2/2003 ແລະ ອຳນາດການປົກຄອງ ບ້ານດອນດູ່ ເຊັນຢັ້ງຢືນຄັ້ງວັນທີ 6/2/2003, ພ້ອມດ້ວຍເຖົ້າແກ່ແນວໂຮມພາຍໃນບ້ານກໍ ຢັ້ງຢືນໃຫ້ວ່າ ເປັນລູກລ້ຽງຂອງພໍ່ຕູ້ສາ ແລະ ແມ່ຕູ້ສີ".

ຝ່າຍ ນ. ຈຳປາ ຜູ້ເປັນນ້າສາວອ້າງວ່າ: "ທ. ກ້າ ບໍ່ມີຄວາມສາມາດທີ່ຈະຄຸ້ມຄອງຊັບສິນໄດ້. ແຕ່ວ່າຄຳເວົ້າຂໍ້ອ້າງຂອງ ທ. ກ້າ ທີ່ເວົ້າວ່າ: ຕົນເອງເປັນລູກລ້ຽງຂອງພໍ່ຕູ້ສາ ແລະ ແມ່ຕູ້ສີນັ້ນບໍ່ແມ່ນຄວາມຈິງ ເພາະວ່າ ພໍ່ຂ້ອຍເພິ່ນໄດ້ເອົາລາວມາລ້ຽງແຕ່ເວລາລາວອາຍຸ 9 ເດືອນ ກໍຍ້ອນວ່າ ຫຼັງຈາກເອື້ອຍຂ້ອຍທີ່ເປັນແມ່ຂອງເຂົາໄປຢູ່ຕ່າງປະເທດ ແຕ່ປີ 1975" ເທົ່ານັ້ນ.

ດ້ວຍເຫດນັ້ນຄະນະສານແພ່ງສານປະຊາຊົນຂັ້ນຕົ້ນນະຄອນຫລວງວຽງຈັນ ກໍໄດ້ທົບທວນຕາມລະບົບຂັ້ນຕອນຂອງສານເຫັນວ່າ: ທ. ກ້າ ມີຫລັກຖານອ້າງອີງຕາມໃບຢັ້ງຢືນຮ່ວມກັນຂອງອຳນາດການປົກຄອງ ບ້ານ ທ່ານາ ແລະ ອຳນາດການປົກຄອງ ບ້ານດອນດູ່, ພ້ອມດ້ວຍເຖົ້າແກ່ແນວໂຮມພາຍໃນບ້ານ ກໍ່ຢັ້ງຢືນ ໃຫ້ວ່າເປັນລູກລ້ຽງຂອງພໍ່ຕູ້ສາ ແລະ ແມ່ຕູ້ສີແທ້. ນອກຈາກນັ້ນ, ບັດປະຈຳຕົວເລກທີ 000000-00 ລົງວັນທີ 20/3/1995 ຂອງລາວຍັງໄດ້ລະບຸກ່ຽວກັບຊື່ພໍ່-ແມ່ວ່າ: ຊື່ພໍ່ ແມ່ນ ທ. ສາ ແລະ ຊື່ແມ່ແມ່ນ ນ. ສີ ຖືກຕ້ອງຕາມກົດໝາຍແທ້.

ດ້ວຍເຫດນັ້ນ,ຄະນະສານແພ່ງຂອງສານປະຊາຊົນຂັ້ນຕົ້ນນະຄອນຫລວງວຽງຈັນ ຈຶ່ງໄດ້ຕັດສິນເປັນຂັ້ນຕົ້ນ ໂດຍຊ້ອງໜ້າທັງສອງຝ່າຍວ່າ: "ໃຫ້ເອົາມູນມໍລະດົກທັງໝົດ 7 ລາຍການມາແບ່ງເປັນ 4 ພູດ. 1 ພູດມອບໃຫ້ ທ. ກ້າ, 1 ພູດມອບໃຫ້ ນ. ຈຳປາ ແລະ ອີກ 2 ພູດແມ່ນໃຫ້ລັດຄຸ້ມຄອງ. ເນື່ອງຈາກອ້າຍ-ເອື້ອຍຂອງ ນ. ຈຳປາ ຊື່ວ່າ: ທ. ມາ ແລະ ນ. ລາ ໄດ້ໂຕນໜີໄປຕ່າງປະເທດແຕ່ປີ 1975. ຖ້າຫາກຝ່າຍໃດບໍ່ພໍໃຈຕໍ່ຄຳຕັດສິນຂອງສານ ກໍສາມາດຂໍອຸທອນໄດ້ພາຍໃນກຳນົດ 20 ວັນ, ນັບແຕ່ມື້ຕັດສິນເປັນຕົ້ນໄປ.

ເມື່ອຜົນອອກມາເປັນແນວນັ້ນນ. ຈຳປາກໍຍິ່ງເກີດຄວາມບໍ່ພໍໃຈເປັນຢ່າງແຮງທີ່ເສຍຜົນປະໂຫຍດທີ່



ຄິດວ່າ ຄວນຈະເປັນຂອງຕົນເພາະໄດ້ສ້າງສາພັດທະນາ ແລະ ເສຍພັນທະໃຫ້ລັດມາໂດຍຕະຫລອດແຕ່ລະປີ. ມີຄຳຖາມໃນໃຈວ່າເປັນຫຍັງສານຈຶ່ງໄດ້ຕັດສິນມູນມໍລະດົກທີ່ຕົນຄຸ້ມຄອງມານັ້ນອອກ ເປັນ 4 ພູດ. ທັງໆທີ່ຕົນເອງກໍເປັນ ຜູ້ຮັບພາລະລ້ຽງດູພໍ່-ແມ່ ແລະ ອ້າຍທັງສອງຄົນມາໂດຍຕະຫລອດຈົນກະທັ້ງພວກເຂົາໄດ້ເສຍຊີວິດ.

ພາຍໃນກຳນົດເວລາ ນ.ຈຳປາ ໄດ້ຂຽນຄຳຮ້ອງຂໍອຸທອນ (ສະບັບລົງວັນທີ 18/1/2005) ຂຶ້ນໄປຫາສານແພ່ງ ຂອງສານອຸທອນພາກກາງອີກເທື່ອໜຶ່ງ ເພື່ອຂໍຄວາມເປັນທຳ. ຮອດວັນທີ 29/1/2008. ສານອຸທອນພາກກາງ ກໍໄດ້ນຳເຂົ້າສູ່ຂະບວນການພິຈາລະນາຕັດສິນອີກ ໂດຍຍົກຄຳເຫັນຂອງການພິຈາລະນາຄຳໃຫ້ການຂອງ ທ. ກ້າ ຜູ້ເປັນຫລານ ແລະ ນ. ຈຳປາ ຜູ້ເປັນນ້າສາວ ແລະ ເຫັນຕາມຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນນະຄອນຫຼວງວຽງຈັນ. ຈາກການໄດ້ຟັງຄຳຖະແຫລງຂອງໄອຍະການປະຊາຊົນຂັ້ນອຸທອນພາກກາງແລ້ວ. ສານກໍ່ຍັງໄດ້ພິຈາລະນາຄຳເວົ້າຂອງ ນ. ຈຳປາ ທີ່ວ່າ:“ສ່ວນມູນມໍລະດົກທັງໝົດ ແມ່ນຕົນເປັນຜູ້ຄຸ້ມຄອງ ກ່ຽວກັບການຮ້ອງຟ້ອງມູນມໍລະດົກຂອງ ທ. ກ້າ ໃຫ້ຜູ້ກ່ຽວນັ້ນທຳຄວາມດີຕໍ່ຕົນກ່ອນ 1-3 ປີແລ້ວຈະພິຈາລະນາ” ແລະ ຄຳອ້າງເຫດຜົນມາຍັງສານອຸທອນພາກກາງວ່າ: “ສະເໜີໃຫ້ຄົ້ນຄວ້າຄືນໃໝ່ ໃນການແບ່ງປັນມູນມໍລະດົກ 2 ພູດ ທີ່ໃຫ້ລັດຄຸ້ມຄອງ” ແລະ ອີກຄຳເວົ້າທີ່ວ່າ: “ການທີ່ສານຂັ້ນຕົ້ນຕັດສິນວ່າ ທ. ກ້າ ເປັນລູກລ້ຽງນັ້ນ ບໍ່ມີມູນຄວາມຈິງ. ເພາະວ່າພໍ່-ແມ່ຂອງຕົນເອົາໂຈດມາລ້ຽງ. ຍ້ອນວ່າແມ່ຂອງເຂົາໄດ້ໂຕນໜີໄປຕ່າງປະເທດ ບໍ່ແມ່ນເອົາຜູ້ກ່ຽວມາລ້ຽງເປັນລູກລ້ຽງ”, ບວກກັບເຫດຜົນໃນຄຳຮ້ອງຟ້ອງ.

ສະນັ້ນ; ສານຈຶ່ງໄດ້ຄົ້ນຄວ້າພິຈາລະນາກ່ຽວກັບການແບ່ງປັນມູນມໍລະດົກໃຫ້ ທ. ກ້າ ຄືນໃໝ່. ເມື່ອສານນຳມາຄົ້ນຄ້ວາພິຈາລະນາໃນຂະບວນການຍຸຕິທຳແລ້ວເຫັນວ່າ: ເຫດຜົນໃນຄຳຮ້ອງຟ້ອງ ມີຫຼັກຖານໃໝ່ກວ່າຢັ້ງຢືນວ່າບໍ່ມີເຫດຜົນ, ເນື່ອງຈາກວ່າ ໃນປີ 1998 ທ. ກ້າ ແມ່ນຂຶ້ນສຳມະໂນຄົວໃໝ່ແລ້ວຕາມສຳມະໂນຄົວສະບັບເລກທີ....ລົງວັນທີ 13/1/1998 ຊຶ່ງລະບຸແຈ້ງວ່າ: ພໍ່ຂອງຕົນຊື່ ທ. ສຳລານ ແລະ ແມ່ຂອງຕົນ ຊື່ ນ. ລາ. ນີ້ສະແດງວ່າ ພໍ່ຕູ້ສາ ແລະ ແມ່ຕູ້ສີ (ຜົວເມຍ) ບໍ່ແມ່ນພໍ່-ແມ່ຂອງລາວແຕ່ຢ່າງໃດ ແລະ ທ. ກ້າ ເອງກໍບໍ່ມີເອກະສານອັນໃດມາຢັ້ງຢືນພໍໃຫ້ສານເຊື່ອຖືໄດ້ກວ່ານີ້ວ່າ ເປັນລູກລ້ຽງພໍ່ຕູ້ສາ ແລະ ແມ່ຕູ້ສີ (ຜົວເມຍ) ແທ້”. ອີກຢ່າງອີງຕາມບົດບັນທຶກຄຳໃຫ້ການຊ້ອງໜ້າທັງ 2 ຝ່າຍ, ສະບັບລົງວັນທີ 23/12/2004 ຂອງ ນ. ຈຳປາ ກໍບໍ່ຮັບຮູ້ວ່າ ທ. ກ້າເປັນລູກຂອງ ພໍ່ຕູ້ສາ ແລະ ແມ່ຕູ້ສີ.

ຫຼັງຈາກນັ້ນ, ສານກໍໄດ້ຕັດສິນວ່າ: ທ. ກ້າ ບໍ່ມີສິດສືບທອດມູນມໍລະດົກດັ່ງກ່າວແລະຄວນນຳເອົາມູນມໍລະດົກທັງ 7 ລາຍການຂອງຜົວເມຍຕູ້ສາ-ຕູ້ສີ ມາແບ່ງເປັນ 3 ພູດສະເໝີກັນ ແລ້ວມອບໃຫ້ ນ. ຈຳປາ, ນ. ລາແລະທ. ມາ ຜູ້ລະພູດ. ແຕ່ວ່າ ທ. ມາແລະນ. ລາ ໄດ້ໂຕນໜີໄປຕ່າງປະເທດຈຶ່ງເຫັນຄວນໃຫ້ລັດຄຸ້ມຄອງ. ສ່ວນລັດຈະມີນະໂຍບາຍໃຫ້ບຸກຄົນໃດຄຸ້ມຄອງ ແລະ ນຳໃຊ້ນັ້ນ ແມ່ນໃຫ້ພາກສ່ວນທີ່ກ່ຽວຂ້ອງເປັນຜູ້ພິຈາລະນາຈຶ່ງເປັນການຖືກຕ້ອງ ແລະ ກໍ່ເຫັນວ່າຄຳຕັດສິນສະບັບເລກທີ..../ຂຕ.ພ ລົງວັນທີ 6/1/2005 ຂອງສານຂັ້ນຕົ້ນນະຄອນຫລວງວຽງຈັນບໍ່ທັນຖືກຕ້ອງແລະສອດຄ່ອງກັບເຫດການຕົວຈິງຂອງຄະດີ ແລະ ລະບຽບກົດໝາຍ. ດັ່ງນັ້ນຈຶ່ງເຫັນຄວນປ່ຽນແປງ ແລະ ໃຫ້ປະຕິບັດຕາມຄຳຕັດສິນພິພາກສາ, ຖ້າຝ່າຍໃດບໍ່ພໍໃຈຕໍ່ຄຳພິພາກສາສະບັບນີ້, ມີສິດຂໍລົບລ້າງ ຫລືສະເໜີຄັດຄ້ານໄດ້ພາຍໃນ 60 ວັນນັບແຕ່ມື້ລົງຄຳພິພາກສາເປັນຕົ້ນໄປ.

ເມື່ອຜົນການຕັດສິນຄະດີຄັ້ງທີ 2 ທີ່ ນ. ຈຳປາ ໄດ້ຍື່ນຂໍອຸທອນຫາສານອຸທອນພາກກາງ ອອກມາເປັນດັ່ງນັ້ນ, ລາວກໍຍິ່ງເກີດຄວາມບໍ່ພໍໃຈເປັນທະວີຄູນ ແລ້ວກໍ່ໄດ້ຮ້ອງຂໍເປັນຄັ້ງສຸດທ້າຍໄປຍັງສານປະຊາ

ຊັ້ນສູງສຸດເພື່ອໃຫ້ນຳມາຄົ້ນຄວ້າພິຈາລະນາອີກເປັນຂັ້ນລົບລ້າງ.

ນ. ຈຳປາ ເວົ້າວ່າ: "ສານອຸທອນເອົາມູນມໍລະດົກ 7 ລາຍການມາແບ່ງເປັນ 3 ພູດ ແລ້ວມອບໃຫ້ຕົນ, ນ. ລາ ແລະ ທ. ມາ ຜູ້ລະພູດນັ້ນແມ່ນຍັງບໍ່ຖືກຕ້ອງ. ເພາະວ່າຊັບທັງໝົດນັ້ນພໍ່ ໄດ້ມອບໃຫ້ຂ້າພະເຈົ້າແລ້ວ ແລະ ສານອຸທອນເອົາມູນມໍລະດົກ 2 ພູດໃຫ້ລັດຄຸ້ມຄອງນັ້ນ, ກໍບໍ່ຖືກຕ້ອງ ເພາະວ່າເປັນຊັບສົມບັດຂອງພໍ່ແມ່ຕົນ, ກໍ່ໄດ້ເສຍພາສີທີ່ດິນມາຕະຫລອດ ອີກຢ່າງເອື້ອຍອ້າຍຕົນກໍ່ບໍ່ແມ່ນຄົນຂາຍຊາດ".

ສານພິຈາລະນາວ່າ: ນ. ຈຳປາ ບໍ່ມີເອກະສານອັນໃດມາອ້າງອີງ ຫລື ຢັ້ງຢືນຕໍ່ສານພໍໃຫ້ເຊື່ອຖືໄດ້ວ່າ ທ. ສາ ຜູ້ເປັນພໍ່ ໄດ້ມອບຊັບສິນທັງໝົດໃຫ້ແທ້ບໍ່. ຖືວ່າເປັນການມອບ ຫລື ຍົກຊັບສິນໃຫ້ໂດຍບໍ່ຖືກຕ້ອງຕາມມາດຕາ 33 ຂອງກົດໝາຍວ່າດ້ວຍມູນມໍລະດົກ ແລະ ພື້ນຖານການສືບທອດມູນມໍລະດົກ ເພາະວ່າ ຄອບຄົວພໍ່ຕູ້ສາ ມີລູກນຳກຳ 5 ຄົນ ຊຶ່ງວ່າ 2 ຄົນ ໄດ້ເສຍຊີວິດໂດຍບໍ່ມີຜູ້ສືບທອດ. ສ່ວນວ່າອ້າຍກັບເອື້ອຍຂອງນາງ ກໍ່ຮັບຮູ້ແລ້ວ; ການທີ່ອ້າງວ່າມູນມໍລະດົກທັງ 2 ພູດຂອງເຂົານັ້ນບໍ່ຖືກຕ້ອງທີ່ຈະເປັນຂອງລັດ ແມ່ນບໍ່ມີເຫດຜົນ ເຖິງວ່າຈະໄດ້ເສຍພາສີ ຫຼື ຄ່າທຳນຽມການນຳໃຊ້ດິນປະຈຳ ຕາມພັນທະກໍ່ຕາມ.

ດ້ວຍເຫດຜົນທັງໝົດນັ້ນ ສານກໍໄດ້ຕັດສິນເປັນຂັ້ນສຸດທ້າຍທາງກົດໝາຍວ່າ: "ຍົກເລີກຄຳຮ້ອງຂໍລົບລ້າງຂອງ ນ. ຈຳປາ ຖິ້ມທັງໝົດ ແລ້ວພິພາກສາຢັ້ງຢືນເອົາຕາມຄຳພິພາກສາ ຂອງສານອຸທອນ ພາກກາງທັງໝົດ ແລະ ໃຫ້ປະຕິບັດຄຳພິພາກສາ ມີຜົນບັງຄັບໃຊ້ເປັນຕົ້ນໄປ.

ສຸດທ້າຍ ນ. ຈຳປາ ແລະ ທ. ກ້າ ສອງນ້າຫຼານກໍ່ບໍ່ໄດ້ຮັບຜົນດີຫຍັງເລີຍຕອບແທນຄືນມາ ມີແຕ່ຄວາມເສຍດາຍໃນໃຈຕໍ່ສິດຜົນປະໂຫຍດຂອງຕົນໃນຊັບສົມບັດທີ່ມີ ແລະ ໄດ້ແຕ່ເກີດຄວາມບາດໝາງເຄືອງແຄງໃຈໃນ ສາຍເລືອດລະຫວ່າງຄອບຄົວນ້າ-ຫຼານເປັນການຕອບແທນ.

## ວິເຄາະກ່ຽວກັບກໍລະນີບັນຫາຂອງເລື່ອງທີ່ເກີດຂຶ້ນ:

ຄວາມຂັດແຍ່ງຂອງ 2 ຄົນ ລະຫວ່າງນ້າສາວກັບຫລານນັ້ນ ເປັນພຽງບັນຫາຄວາມບໍ່ເຂົ້າໃຈກັນໃນຄອບຄົວ ແລະ ຄວາມບໍ່ເອື້ອເຟື້ອເພື່ອແຜ່ຜ່ອນສັ້ນຜ່ອນຍາວໃຫ້ແກ່ກັນ ຂອງນ້າສາວຄົນນັ້ນ ແຕ່ເມື່ອເບິ່ງເລິກໆແລ້ວເຫດກໍ່ຢູ່ທີ່ວ່າ:

- ບັນຫານີ້ຄົງຈະບໍ່ເກີດຂຶ້ນຖ້າຫາກຊັບສິນໄດ້ມີການແບ່ງປັນກັນກ່ອນ ໃນເວລາທີ່ພໍ່ແມ່ຍັງມີຊີວິດຢູ່ ຖ້າອີງໃສ່ກົດໝາຍແລ້ວ ຄວນຈະມີລາຍລັກອັກສອນແບ່ງປັນກັນກ່ອນເວລາລູກທັງ 5 ຄົນຢູ່ຄົບ ອາດຈະເປັນລາຍລັກອັກສອນອັນໃດອັນໜຶ່ງຢັ້ງຢືນຈາກພໍ່ແມ່ໄວ້. ໃນບັນຫາຈຸດນີ້ເຫັນວ່າອາດຈະເນື່ອງມາຈາກການຮັບຮູ້ດ້ານລະບຽບກົດໝາຍ ແລະ ນະໂຍບາຍຕ່າງໆທີ່ນຳມາຈັດຕັ້ງປະຕິບັດຢູ່ໃນສັງຄົມໄລຍະເວລານັ້ນຍັງບໍ່ທັນທົ່ວເຖິງ ອາດຈະຍ້ອນການໂຄສະນາ-ເຜີຍແຜ່ລະບຽບກົດໝາຍຍັງບໍ່ທັນໄດ້ຮັບການປະຕິບັດເທົ່າທີ່ຄວນ. ຈຶ່ງເປັນເຫດເຮັດໃຫ້ບໍ່ໄດ້ມີການຕົກລົງແບ່ງປັນຊັບສິນທີ່ເປັນມູນມໍຣະດົກດັ່ງກ່າວ.
- ເລື່ອງລາວທຸກຢ່າງຂອງຄວາມຂັດແຍ່ງ ລະຫວ່າງທັງສອງຄົນນ້າກັບຫຼານ ຄົງຈະບໍ່ເປັນແບບນີ້ ຖ້າໄດ້ຮັບການແນະນຳ ຫຼື ແກ້ໄຂທີ່ຖືກຕ້ອງຕາມຂັ້ນຕອນ. ຕໍ່ກັບບັນຫາທີ່ເກີດຂຶ້ນນີ້ກົດໝາຍວ່າດ້ວຍທີ່ດິນຂອງ ສປປ ລາວ (2003) ກໍ່ຍັງໄດ້ກຳນົດໄວ້ຢູ່ໃນມາດຕາ 81. ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ

ທີ່ມີລັກສະນະທ່າງແພ່ງກ່ຽວກັບທີ່ດິນວ່າ: "ການສືບທອດມູນມໍລະດົກທີ່ມີການພັດທະນາແລ້ວ, ການໂອນສິດນຳໃຊ້ທີ່ດິນ ແລະ ສັນຍາທາງແພ່ງອື່ນໆ ກ່ຽວກັບທີ່ດິນນັ້ນແມ່ນສານປະຊາຊົນເປັນຜູ້ຕັດສິນຕາມກົດໝາຍ. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະທາງແພງກ່ຽວກັບທີ່ດິນນັ້ນ ແມ່ນໃຫ້ອົງການປົກຄອງບ້ານ ບ່ອນທີ່ດິນຕັ້ງຢູ່ໄກ່ເກັ່ຍເສັຍກ່ອນ, ຖ້າຫາກບໍ່ສາມາດຕົກລົງກັນໄດ້ ກໍສະເໜີໃຫ້ອົງການປົກຄອງເມືອງ, ເທດສະບານເປັນຜູ້ໄກ່ເກັ່ຍ; ຖ້າຫາຍັງບໍ່ສາມາດແກ້ໄຂໄດ້ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານ".

- ແຕ່ໃນເລື່ອງນີ້ພັດບໍ່ໄດ້ມີການໄກ່ເກັ່ຍຢູ່ແຕ່ລະຂັ້ນກ່ອນ; ຄູ່ກໍລະນີພັດຮ້ອງຟ້ອງຂຶ້ນມາຍັງສານຂັ້ນຕົ້ນເລີຍໂລດ. ສະນັ້ນ, ບັນຫາທີ່ຄວນຈະໄດ້ຮັບການແກ້ໄຂໃນຂັ້ນເບື້ອງຕົ້ນຈາກບ້ານກ່ອນ ພັດກາຍເປັນບັນຫາທີ່ໃຫຍ່ໂຕຂຶ້ນກະທົບເຖິງຫຼາຍໆດ້ານຕໍ່ຄອບຄົວ ທີ່ກ່ຽວພັນໄປເຖິງສາຍພົວພັນຂອງສັງຄົມ.

- ສຳລັບທັງສອງຄົນອ້າຍນ້ອງ ຊຶ່ງເປັນລູກຂອງເຈົ້າມູນທີ່ໂຕນໜີໄປຕ່າງປະເທດກ່ອນການສະຖາປະນາປະເທດເປັນ ສປປ ລາວ ນັ້ນທັງໆທີ່ສານກໍ່ຮັບຮູ້ແລ້ວວ່າເປັນຄົນໂຕນ ເຫັນຄວນຈະນຳເອົາມາພິຈາລະນາຢູ່ໃນຈຸດນີ້ຫຼືບໍ່?

ໂດຍອີງໃສ່ແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 337/ຫສພ. (ກ່ຽວກັບບັນຫາການປະຕິບັດກົດໝາຍວ່າດ້ວຍ ມໍຣະດົກ ແລະ ພື້ນຖານການສືບທອດມູນມໍລະດົກ ໄດ້ລະບຸໄວ້ວ່າ ກໍລະນີ: "ເຈົ້າມູນເປັນຄົນລາວ ລູກຈຳນວນໜຶ່ງຢູ່ລາວ ແລະ ຈຳນວນໜຶ່ງຢູ່ຕ່າງປະເທດ ເມື່ອເຈົ້າມູນເສຍຊີວິດ ພວກລູກຟ້ອງຂຶ້ນສານເພື່ອຍາດແຍ່ງມູນມໍຣະດົກ, ຜ່ານມາສານຕັດສິນແບ່ງມູນໃຫ້ລູກ, ພູດຂອງລູກທີ່ຢູ່ຕ່າງປະເທດຖືວ່າເປັນຂອງຄົນໂຕນແລ້ວໃຫ້ເປັນຂອງລັດ; ເມື່ອຄົ້ນຄ້ວາແລ້ວເຫັນວ່າບໍ່ຖືກຕ້ອງ. ສະນັ້ນ, ຄວນໃຫ້ຜູ້ຍັງຢູ່ໃນປະເທດເປັນຜູ້ປົກປັກຮັກສາ ແລະ ນຳໃຊ້ລໍຖ້າເວລາເຂົາກັບມາ; ສຳລັບບັນຫານີ້ຂັ້ນເທິງມີຄຳເຫັນວ່າ: "ຕ້ອງເບິ່ງຜູ້ໂຕນ ແລະ ເຫດຜົນຂອງຜູ້ໂຕນ").

ແຕ່ຢູ່ໃນຈຸດນີ້ ເມື່ອສານໄດ້ນຳມາພິຈາລະນາແລ້ວກໍ່ຕັດສິນໃຫ້ ມູນມໍຣະດົກ ສອງພູດເປັນຂອງ ທ. ມາ ແລະ ນ. ລາ ສືບທອດນັ້ນ ໃຫ້ລັດເປັນຜູ້ຄຸ້ມຄອງນັ້ນ ຖ້າຈະເວົ້າເບື້ອງກົດໝາຍແລ້ວ ຕາມກົດໝາຍທີ່ດິນ(2003) ເຫັນວ່າຖືກຕ້ອງຕາມ ມາດຕາ3 (ໃໝ່): ວ່າດ້ວຍກຳມະສິດກ່ຽວກັບທີ່ດິນ ໄດ້ກຳນົດວ່າ: "ທີ່ດິນແຫ່ງ ສປປ ລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງລັດຖະທຳມະນູນຊຶ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນເປັນເອກະພາບກັນໃນທົ່ວປະເທດ ແລະ ມອບໃຫ້ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງເສດຖະກິດນຳໃຊ້ເຊົ່າ ຫຼື ສຳປະທານ; ມອບໃຫ້ກົມກອງປະກອບອາວຸດ, ອົງການຂອງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນໃຊ້".

ແຕ່ວ່າໃນມາດຕາ76 ຂອງກົດໝາຍທີ່ດິນ(2003) ກໍ່ຍັງໄດ້ກຳນົດກ່ຽວກັບທີ່ດິນຂອງຜູ້ປະໜີໄປຕ່າງປະເທດ ວ່າ: "ລັດບໍ່ຮັບຮູ້ການທວງເອົາຄືນ ທີ່ດິນຂອງຜູ້ທີ່ໄດ້ປະໜີໄປຕ່າງປະເທດ".

- ຢູ່ໃນການປະຕິບັດຂອດປະສານງານລະບົບ ການຄຸ້ມຄອງຂໍ້ມູນພົນລະເມືອງເປັນໄປໄດ້ບໍ່ວ່າອາດຈະບໍ່ໄດ້ມີການປະສານກັນກ່ຽວກັບຂໍ້ມູນທີ່ກ່ຽວຂ້ອງຢ່າງລະອຽດກ່ອນ ຈະອອກບັດປະຈຳຕົວໃຫ້ໂດຍຢູ່ໃນບັດປະຈຳຕົວພັດລະບຸກ່ຽວກັບຊື່ພໍ່-ແມ່ວ່າ: ຊື່ພໍ່ ແມ່ນ ທ. ສາ ແລະ ຊື່ແມ່ແມ່ນ ນ. ສີ. ເມື່ອສານເຫັນວ່າຫຼັກຖານທີ່ສະແດງໃຫ້ເຫັນການອ້າງເຫດຜົນຂອງ ທ. ກ້າ ໃນບັດປະຈຳຕົວເລກທີ 000000-00 ລົງວັນທີ 20/3/1995 ລະບຸກ່ຽວກັບຊື່ພໍ່-ແມ່ວ່າ: ຊື່ພໍ່ ແມ່ນ ທ. ສາ ແລະ ຊື່ແມ່ແມ່ນ ນ. ສີ. ກໍ່ໄດ້ນຳ

ເຂົ້າພິຈາລະນາໃນເຫດຜົນ ແຕ່ໃນທາງກັບກັນກໍ່ພັດມີຫຼັກຖານປະກອບອ້າງເຫດຜົນໂຕ້ຕອບຂອງ ນ. ຈໍາປານ້າສາວເພື່ອໃຫ້ສານພິຈາລະນາອີກວ່າ: (ໃນປີ 1998 ຂຶ້ນສໍາມະໂນຄົວສະບັບເລກທີ……. ລົງວັນທີ 13/1/1998 ຊຶ່ງລະບຸແຈ້ງວ່າ: ພໍ່ຂອງຕົນຊື່ ທ. ສໍາລານ ແລະ ແມ່ຂອງຕົນ ຊື່ ນ. ລາ. ສະນັ້ນ ຕໍ່ກັບຈຸດນີ້ຖ້າເກີດມີຂໍ້ມູນທັບຊ້ອນກັນຄືແບບນີ້ກໍ່ອາດຈະສ້າງຄວາມສັບສົນສໍາຫຼັບການຄຸ້ມຄອງຂອງສັງຄົມໃນຕໍ່ໜ້າໄດ້.

## 3. ສະຫລຸບ

- ບັນຫາຄວາມຂັດແຍ່ງທີ່ເກີດຂື້ນຂອງສອງຄົນ ເປັນເພາະບໍ່ໄດ້ຮັບການແກ້ໄຂແລະຄໍາແນະນໍາຢ່າງຖືກຕ້ອງຈາກແຕ່ລະຂັ້ນໂດຍພື້ນຖານ. ດ້ານໜຶ່ງຍ້ອນວ່າຄວາມຮັບຮູ້ຈາກການຕອບສະໜອງທາງດ້ານການໂຄສະນາ-ເຜີຍແຜ່ ລະບຽບກົດໝາຍ ຫຼື ນະໂຍບາຍໃນໄລຍະນັ້ນຍັງບໍ່ທົ່ວເຖິງ.

- ຖ້າມີການໂອ້ລົມກັນດ້ວຍເຫດແລະຜົນຮັບຮູ້ສິດພັນທະໃນກໍາມະສິດ, ມີຄວາມເອື້ອເຟື້ອເຜື່ອແຜ່ປານີປານອມຊຶ່ງກັນ ແລະ ກັນແດ່ ບໍ່ຈໍາເປັນທີ່ຈະເປັນບັນຫາໃຫຍ່ ຕ້ອງຟ້ອງຂື້ນສານໃຫ້ຕັດສິນພວກເຂົາກໍຈະບໍ່ສູນເສຍຊັບສິນບັດສ່ວນໃດໜຶ່ງຂອງພໍ່ແມ່ທີ່ໄດ້ສ້າງສາພັດທະນາແລ້ວນັ້ນ. ໄປໃຫ້ລັດ ເປັນຜູ້ຄຸ້ມຄອງດູແລ ຫຼື ມອບຄືນໃຫ້ເປັນຂອງລວມຂອງວົງຄະນະຍາດແຫ່ງຊາດ.

- ຍ້ອນຂອດການຈັດຕັ້ງປະຕິບັດ ແລະ ການປະສານງານບາງອັນທີ່ລວມເຖິງການໄກ່ເກັ່ຍຂໍ້ຂັດແຍ່ງຍັງບໍ່ທັນໄດ້ຮັບການປະຕິບັດຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບຄວາມເປັນຈິງເທື່ອ ຈຶ່ງເປັນສາຍເຫດທີ່ມີຜົນຕໍ່ຂະບວນການປະຕິບັດນະໂຍບາຍ ທີ່ອາດຈະເກີດບັນຫາຫລາຍໆຢ່າງຢູ່ໃນສັງຄົມຕາມມາ.

## 4. ຂໍ້ສະເໜີແນະ

- ຂະແໜງການພາກລັດຄວນຈະຕ້ອງເອົາໃຈໃສ່ລະບົບຂອດປະສານງານດ້ານຂໍ້ມູນຂ່າວສານ ແລະ ການໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ໃຫ້ທົ່ວເຖິງທຸກໆຊັ້ນຄົນໃນສັງຄົມຢ່າງເປັນປົກກະຕິແຕ່ຕົວເມືອງລົງຮອດທ້ອງຖິ່ນ.

- ຜູ້ເປັນພໍ່-ແມ່ຄວນຈະມີການໂອລົມຢູ່ໃນຄອບຄົວ ຫຼື ມີລາຍລັກອັກສອນທີໃຊ້ເປັນຫຼັກຖານສະແດງເຖິງການແບ່ງປັນມູນມໍຣະດົກໂດຍມີພະຍານຢັ້ງຢືນນັ້ນກ່ອນ. ເພື່ອຮັບປະກັນບໍ່ໃຫ້ເກີດ ບັນຫາຕ່າງໆທີ່ອາດຈະເກີດຂຶ້ນກັບຄອບຄົວ ຫຼື ສັງຄົມຢ່າງບໍ່ຄາດຄິດ.

- ບັນຫາຄວາມຂັດແຍ່ງຕ່າງໆທີ່ເກີດຂຶ້ນ ຄວນຈະຕ້ອງມີການສຶກສາອົບຮົມໃຫ້ຄໍາແນະນໍາຢ່າງຖືກຕ້ອງນັບແຕ່ຂັ້ນທ້ອງຖິ່ນ ບ້ານ, ເມືອງ, ແຂວງ ຕາມລໍາດັບ. ເພື່ອຫຼີກລ້ຽງບັນຫາທີ່ຍາກຈະແກ້ໄຂ ກາຍເປັນບັນຫາຄວາມບໍ່ເຂົ້າໃຈຂອງສັງຄົມໃນຫຼາຍດ້ານ.

- ໃນການຕັດສິນຂອງສານລັກສະນະຄະດີແບບນີ້ຕໍ່ໜ້າແມ່ນຍັງຈະມີການພິຈາລະນາຄືແນວນີ້ອີກບໍ່? ສໍາລັບຄົນໂຕນໄປຕ່າງປະເທດໃນເມືອກ່ອນຍັງມີສິດທີ່ຈະສືບທອດມູນຢູ່ບໍ່? ແລະ ໃນຕໍ່ໜ້າໃນສະພາບ ທີ່ສັງຄົມມີການປ່ຽນແປງ ທາງເບື້ອງລັດຖະບານຄວນຈະມີນິຕິກໍາອັນໃດເພື່ອເປັນບ່ອນອີງທີ່ຊັດເຈນໃຫ້ແກ່ການພິຈາລະນາຂອງສານ.

# ເອກະສານອ້າງອີງມາຈາກ:

- ຄໍາຕັດສິນຂອງສານ ແລະ ເອກະສານວິນິໄສຄໍາໃຫ້ການ ສະບັບເລກທີ.......
- ກົດໝາຍວ່າດ້ວຍມູນມໍລະດົກແລະການສືບທອດມູນມໍລະດົກ ແລະ
- ກົດໝາຍວ່າດ້ວຍທີ່ດິນສະບັບ ປີ 2003,
- ແຈ້ງການຂອງຫ້ອງວ່າການສູນກາງພັກເຖິງສານປະຊາຊົນສູງສຸດເລກທີ 337/ຫສພ.

## ໝາຍເຫດ

ຕ້ອງຂໍອະໄພໃນຊື່ທີ່ອາດຈະໄປຕົງກັບທ່ານໃດທ່ານໜຶ່ງທີ່ອ້າງອີງເປັນນາມສົມມຸດຂອງແຕ່ລະ ຄົນໃນເລື່ອງ

# ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

## *ເປົ້າໝາຍຂອງໂຄງການ*

ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງ ໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

## *ຈຸດປະສົງຂອງໂຄງການ*

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປຶກສາ ຫາລື ກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## *ໂຄງການດຳເນີນງານໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້*

- ຄວາມເປັນເຈົ້າການຂອງຄົນລາວ
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທຳທ້ອງຖິ່ນ
- ຄວາມເປັນກາງ
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ
- ເຮັດໃຫ້ມີຄວາມຫຼາກຫຼາຍ
- ການມີສ່ວນຮ່ວມ

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ
ຊັບພະຍາກອນທຳມະຊາດ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)21 312519

ອີແມວ: info@rightslinklao.org
www.rightslinklao.org